**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ເລກທີ: 3757/ກງ

ນະຄອນຫຼວງວຽງຈັນ, ວັນທີ: 18 ທັນວາ 2019.

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງແຜນພັດທະນາຂອງຂະແໜງພາສີ ຮອດປີ 2020

- ອີງຕາມ ກົດໝາຍ ວ່າດ້ວຍພາສີ, ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ປັບປຸງບາງມາດຕາ, ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 8 ພຶດສະພາ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 204/ນຍ, ລົງວັນທີ 4 ກໍລະກົດ 2017 ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ວິໄສທັດຮອດປີ 2030 ແລະ ຍຸດທະສາດພັດທະນາການເງິນ ແຫ່ງລັດ ຮອດປີ 2025;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມພາສີ, ສະບັບເລກທີ 2826/ກງ, ລົງວັນທີ 22 ສິງຫາ 2017.

**ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ຕົກລົງ:**

**ມາດຕາ 1:** ເຫັນດີຮັບຮອງແຜນພັດທະນາວຽກງານພາສີ ຂອງຂະແໜງພາສີ ຮອດປີ 2020.

**ມາດຕາ 2:** ມອບໃຫ້ ກົມພາສີ ດຳເນີນການສ້າງແຜນລະອຽດ ເພື່ອຜັນຂະຫຍາຍການຈັດຕັ້ງປະຕິບັດແຜນພັດທະນາ ຂອງຂະແໜງພາສີ ຮອດປີ 2020 ໂດຍມີການກຳນົດເວລາປະຕິບັດແຕ່ລະໜ້າວຽກລະອຽດ ແລະ ລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ຄະນະນຳກະຊວງການເງິນ ຮັບຊາບແຕ່ລະໄລຍະ.

**ມາດຕາ 3:** ມອບໃຫ້ ກົມພາສີ, ກະຊວງການເງິນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້,ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້ ໃຫ້ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ.

**ມາດຕາ 4:** ແຜນພັດທະນາສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຮອງນາຍົກລັດຖະມົນຕີ,**

**ລັດຖະມົນຕີກະຊວງການເງິນ**

ກະຊວງການເງິນ

ສົມດີ ດວງດີ

Scanned by CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມນະໂຍບາຍການເງິນ ແລະ ນິຕິກຳ

ເລກທີ 602 /ນຍກ
ນະຄອນຫລວງວຽງຈັນ, ວັນທີ 20 ກັນຍາ 2019

## ສະໂນດນຳສົ່ງ

**ຮຽນ:** ທ່ານ ຮັກສາການຫົວໜ້າກົມພາສີ ທີ່ນັບຖື,

**ເລື່ອງ:** ນຳສົ່ງການຮັບຮອງແຜນພັດທະນາຂອງຂະແໜງພາສີ ຮອດປີ 2020

- ອີງຕາມຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມນະໂຍບາຍການເງິນ ແລະ ນິຕິກຳ ສະບັບເລກທີ 2836/ກງ, ລົງວັນທີ 22 ສິງຫາ 2017.
- ອີງຕາມຂໍ້ຕົກລົງທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ວ່າດ້ວຍການຮັບຮອງແຜນພັດທະນາຂອງຂະແໜງພາສີ ຮອດປີ 2020 ສະບັບເລກທີ 3757/ກງ, ລົງວັນທີ 18 ກັນຍາ 2019.

ກົມນະໂຍບາຍການເງິນ ແລະ ນິຕິກຳ ຂໍຖືເປັນກຽດນຳສົ່ງເອກະສານມາຍັງທ່ານ ດັ່ງນີ້:

| ລ/ດ | ເນື້ອໃນ | ຈຳນວນ | ໝາຍເຫດ |
|---|---|---|---|
| 01 | ຂໍ້ຕົກລົງວ່າດ້ວຍການຮັບຮອງແຜນພັດທະນາຂອງຂະແໜງພາສີ ຮອດປີ 2020 ສະບັບເລກທີ 3757/ກງ, ລົງວັນທີ 18 ກັນຍາ 2019 | 01 ສະບັບ | ເພື່ອຈັດພິມ ແລະ ນຳໄປເຜີຍແຜ່ຂະຫຍາຍຈັດຕັ້ງປະຕິບັດແຜນພັດທະນາຂອງຂະແໜງພາສີເປັນອັນລະອຽດ |

ດັ່ງນັ້ນ, ຈິ່ງຮຽນມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

ດ້ວຍຄວາມນັບຖື,
**ຫົວໜ້າກົມ**

ກະຊວງການເງິນ ... ກົມນະໂຍບາຍການເງິນ ແລະ ນິຕິກຳ

ປອ ບຸນເຫຼືອ ສິນໄຊວໍຣະວົງ


ຕິດຕໍ່ພົວພັນ:
ກົມນະໂຍບາຍການເງິນ ແລະ ນິຕິກຳ
ໂທ/ແຟັກ: 021 412408


Scanned by CamScanner